# ບໍ່ແມ່ນການບັນເທີງ

(ອ່ານພຣະທັມເພງສັຣເສີນ 95:1-7 )

---

"ມາເທີ້ນ ພວກເຮົາມານະມັສການແລະຂາບລົງ ໃຫ້ເຮົາຄຸເຂົ່າລົງຕໍ່ພຣະເຈົ້າຜູ້ສ້າງພວກເຮົາ"
( ເພງສັຣເສີນ 95:6 )

---

ບາງຄົນຄິດວ່າການໄປນະມັສການຢູ່ທີ່ຄຣິສຕະຈັກບໍ່ແຕກຕ່າງກັນກັບການໄປເບິ່ງການສະແດງດົນ ຕຣີ ( ຄອນເສີດ) ແຕ່ກໍອາດຈະມີບາງຢ່າງທີ່ຄືກັນເຊັ່ນ: ເຮົາຕ້ອງອອກຈາກບ້ານໄປສະຖານທີ່ນັ້ນ, ເຮົາຕ້ອງເຕົ້າໂຮມຄົນທີ່ມີຄວາມສົນໃຈຢ່າງດຽວກັນ, ເຮົາຕ້ອງແນມໄປທາງໜ້າ, ຫຼືບໍ່ກໍຢູ່ໃນຫ້ອງທີ່ມີເພດານທີ່ສູງເໝືອນກັນ. ( ນັ້ນຄືສິ່ງທີ່ຄ້າຍຄືກັນ )

ເຖິງຢ່າງໃດກໍຕາມ, ຍັງມີຫຼາຍຢ່າງທີ່ແຕກຕ່າງກັນ: ການໄປນະມັສການບໍ່ຈຳເປັນຕ້ອງຊື້ປີ້ຜ່ານປະຕູ, ບໍ່ອະນຸຍາດໃຫ້ກິນເຂົ້າຂວ້າງ, ສິ່ງສຳຄັນທີ່ສຸດນັ້ນຄື ເປົ້າໝາຍການໄປໂບດ "ບໍ່ແມ່ນເພື່ອການບັນເທີງ" ຍ້ອນສາຍເຫດນີ້ເອງ, ບັນດາຜູ້ເຊື່ອຈຳນວນຫຼວງຫຼາຍຈຶ່ງມີຄວາມຄິດທີ່ຜິດ ເຂົາເຈົ້າຄິດວ່າບັນດາຜູ້ທີ່ຢູ່ທາງໜ້າເວທີໄດ້ກະທຳເພື່ອຜົນປໂຍດຂອງຄຣິສຕະຈັກ, ເຮັດໃຫ້ຄົນມີຄວາມຕື່ນເຕັ້ນ, ໄດ້ຮັບຄວາມ ປະທັບໃຈ, ແລະໄດ້ຮັບຄວາມມ່ວນຊື່ນລື້ນເລີງ. ຄວາມຄິດດັ່ງກ່າວນີ້ ເປັນຄວາມຄິດທີ່ຜິດ, ເປົ້າໝາຍຂອງຄຣິສຕະຈັກນັ້ນແມ່ນອົງພຣະຜູ້ເປັນເຈົ້າ ພວກເຮົາໄປໂບດເພື່ອນະມັສການພຣະອົງ.

ທ່ານ ຈອນ ເຟແລນ ໄດ້ຂຽນຄຳສັນຍາຕອນນຶ່ງໄວ້ວ່າ " ການນະມັສການບໍ່ແມ່ນການເຮັດໃຫ້ຂ້າພະເຈົ້າຊົມຊື່ນ, ເຮັດໃຫ້ຂ້າພະເຈົ້າມີຄວາມສຸກ, ເຮັດໃຫ້ຖືກໃຈຂ້າພະເຈົ້າ, ເຮັດໃຫ້ຖືກຕາມຄວາມຄາດໝາຍຂອງຂ້າພະເຈົ້າ, ແຕ່ການນະມັສການແມ່ນເພື່ອຖວາຍພຣະກຽດແດ່ອົງພຣະຜູ້ເປັນເຈົ້າ, ບໍ່ແມ່ນໃຫ້ຂ້າພະເຈົ້າເປັນຄົນທີ່ສຳຄັນຜູ້ນຶ່ງໃນການນະມັສການ, ຫາກແຕ່ແມ່ນອົງພຣະຜູ້ເປັນເຈົ້າເປັນຜູ້ສຳຄັນສູງສຸດ."

ຂໍ້ພຣະຄັມພີສຳລັບທ່ານໃນວັນນີ້ໄດ້ແກ່ ພຣະທັມເພງສັຣເສີນບົດທີ 8, ໃຫ້ພວກເຮົານະມັສການດ້ວຍຄວາມຍິນດີຊົມຊື່ນ, ດ້ວຍການຂອບພຣະຄຸນ, ແລະໂຄຣົບນອບນ້ອມຕໍ່ພຣະພັກພຣະຜູ້ເປັນເຈົ້າ. "ມາເທີ້ນ ໃຫ້ພວກເຮົາມານະມັສການພຣະອົງ..." ( ເພງສັຣເສີນ 95:6 )

ແມ່ນຫຍັງທີ່ດົນໃຈໃຫ້ຂ້າພະເຈົ້າໄປໂບດ? ຂ້າພະເຈົ້າຈະຕຽມຈິດໃຈສຳລັບນະມັສການພຣະເຈົ້າຢ່າງໃດ? ຂ້າພະເຈົ້າຈະຕັ້ງໃຈໃຫ້ຈິດໃຈຈົດຈໍ່ໃນພຣະຜູ້ເປັນເຈົ້າໄດ້ຢ່າງໃດ? ການນະມັສການທີ່ແທ້ຈິງແມ່ນໃຫ້ພຣະເຈົ້າເປັນສູນກາງ, ພຣະອົງເປັນຜູ້ສຳຄັນທີ່ສຸດ, ແລະສູງສຸດ.

---

ຮຽບຮຽງຈາກ ອາວເດລີເບຣດ